ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ໂຄງການພັດທະນາອາຊີວະສຶກສາ ສປປ ລາວ (VELA)

**ໂຄງການ VELA ໄດ້ສະໜັບສະໜູນ ສປປ ລາວ ໂດຍການນຳສະເໜີວິທີການ ອາຊີວະສຶກສາແບບຄວບຄູ່ ເພື່ອພັດທະນາສີມືແຮງງານໃຫ້ຕອບສະໜອງຄວາມຕ້ອງການ ຂອງຕະຫຼາດແຮງງານ**

## ຄວາມເປັນມາ

ພາຍຫຼັງທີ່ມີການເຕີບໂຕ ມາເປັນເວລາຫຼາຍປີ, ເສດຖະກິດຂອງ ສປປ ລາວ ໄດ້ຮັບຜົນກະທົບຈາກການແຜ່ລະບາດ ຂອງພະຍາດໂຄວິດ-19 ເຊິ່ງໃນນັ້ນແມ່ນ ສິນຄ້າທີ່ມີລາຄາສູງຂຶ້ນ. ພະຍາດດັ່ງກ່າວ ໄດ້ເຮັດໃຫ້ການສຶກສາ ແລະ ການຝຶກອົບຮົມ ບໍ່ສາມາດດຳເນີນໄປໄດ້ເປັນເວລາ 2 ປີ. ການຂາດກຳລັງແຮງງານທີ່ມີສີມື ແມ່ນອຸປະສັກສຳຄັນ ຕໍ່ການຟື້ນຟູ ແລະ ການພັດທະນາດ້ານເສດຖະກິດ, ໂດຍສະເພາະແມ່ນຢູ່ໃນບັນດາແຂວງ ທີ່ມີທ່າແຮງດ້ານເສດຖະ ກິດຂອງປະເທດ.

ປັດຈຸບັນ, ລະບົບອາຊີວະສຶກສາໃນປະເທດລາວ ພຽງແຕ່ສະໜອງນັກສຶກສາຮຽນຈົບ ທີ່ມີທັກສະ ແລະ ຄວາມສາມາດທີ່ສອດຄ່ອງ ກັບຄວາມຕ້ອງການຂອງຕະຫຼາດແຮງງານລາວ ໃນຈຳນວນທີ່ຈຳກັດເທົ່ານັ້ນ. ທັງພາກ ລັດ ແລະ ບັນດາຫົວໜ່ວຍທຸລະກິດ ຍັງບໍ່ສາມາດຮ່ວມກັນຮັບມືກັບສິ່ງທ້າທາຍນີ້ໄດ້. ແຕ່ດ້ວຍ ອາຊີວະສຶກສາແບບຄວບຄູ່ (ອສຄ) ຈະຊ່ວຍໃຫ້ພາກລັດ ແລະ ບັນດາຫົວໜ່ວຍທຸລະກິດມີຄວາມຮັບຜິດຊອບ ໃນການພັດທະນາສີ ມືແຮງງານ, ສາມາດຊ່ວຍສ້າງກຳລັງແຮງງານ ທີ່ຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານໄດ້.

## ຈຸດປະສົງ

ສາຂາທີ່ຈັດຕັ້ງການຮຽນ-ການສອນ ອາຊີວະສຶກສາແບບຄວບຄູ່ (ອສຄ) ທີ່ແທດເໝາະ ໄດ້ຖືກຈັດຕັ້ງປະຕິບັດ ຢູ່ບັນດາເຂດສູນກາງທີ່ເປັນທ່າແຮງດ້ານເສດຖະກິດ ເຊັ່ນ: ແຂວງຫຼວງພະບາງ, ຈຳປາສັກ, ນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ.



ຄູຝຶກຢູ່ຫົວໜ່ວຍທຸລະກິດ ນຳພານັກສຶກສາຮຽນປະຕິບັດຕົວຈິງ ໃນໂຮງຊ່າງ ສາຂາຊ່າງລົດຍົນ.

ຮູບໂດຍ: © GIZ/ພູນຊັບ ເທວົງສາ

| | |
|---|---|
| ຊື່ໂຄງການ | ໂຄງການພັດທະນາອາຊີວະສຶກສາ ໃນ ສປປ ລາວ (VELA) |
| ໃຫ້ທຶນໂດຍ | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ເຢຍລະມັນ (BMZ) |
| ເຂດເປົ້າໝາຍຂອງໂຄງການ | ສປປ ລາວ (ແຂວງ ຫຼວງພະບາງ, ຈຳປາສັກ, ແຂວງວຽງຈັນ ແລະ ນະຄອນຫຼວງວຽງຈັນ) |
| ຄູ່ຮ່ວມງານໂຄງການ | ກະຊວງສຶກສາທິການ ແລະ ກິລາ (ສສກ), ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (ສຄອຊ) |
| ໄລຍະເວລາຂອງໂຄງການ | 2019 - 2024 |

## ວິທີການດຳເນີນງານ

ໂຄງການສະໜັບສະໜູນ ກະຊວງສຶກສາທິການ ແລະ ກິລາ (ສສກ) ແລະ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (ສຄອຊ) ດ້ວຍການສືບຕໍ່ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານ ອສຄ ໂດຍການຮ່ວມມືຢ່າງໃກ້ຊິດກັບພາກລັດ ແລະ ບັນດາຫົວໜ່ວຍທຸລະກິດ ເຊິ່ງລວມມີກິດຈະກຳດັ່ງນີ້:

- ໃນລະດັບສະຖາບັນອາຊີວະສຶກສາ: ສ້າງຂີດຄວາມສາມາດ ແລະ ພັດທະນາໂຄງຮ່າງການຈັດຕັ້ງ ເພື່ອວາງແຜນ ແລະ ຈັດຕັ້ງປະຕິບັດ ອສຄ ໃນແຂວງທີ່ມີຄວາມຕ້ອງການແຮງງານ ທີ່ມີທັກສະສູງ, ເຊິ່ງເກີດຂຶ້ນໂດຍການຮ່ວມມື ຢ່າງໃກ້ຊິດກັບບັນດາສະຖານປະກອບການ ທີ່ສະໜອງການຝຶກປະຕິບັດຕົວຈິງ 50%.
- ພື້ນຖານໂຄງລ່າງດ້ານໄອທີໄດ້ຮັບການປັບປຸງ ແລະ ຖືກນຳໃຊ້ໄດ້ດີຂຶ້ນ, ໄດ້ແນະນຳ 'ອາຊີວະສຶກສາແບບສີຂຽວ' ແລະ ສະໜອງການບໍລິການໃຫ້ຄຳປຶກສາດ້ານອາຊີບ ໃຫ້ແກ່ນັກສຶກສາ.
- ບັນດາຫົວໜ່ວຍທຸລະກິດ: ໄດ້ເຮັດວຽກຮ່ວມກັບ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) ໃນການສ້າງຕັ້ງສູນບໍລິການ ອສຄ ເຊິ່ງສະໜອງຂໍ້ມູນ, ການມອບໃບຍ້ອງຍໍ ແລະ ການໂຄສະນາກ່ຽວກັບ ອສຄ ໃຫ້ບັນດາຫົວໜ່ວຍທຸລະກິດ ທີ່ສົນໃຈເຂົ້າຮ່ວມໃນວຽກງານ ອສຄ.
- ບັນດາຫົວໜ່ວຍທຸລະກິດ ໄດ້ຮັບການສະໜັບສະໜູນ ໃຫ້ມີບົດບາດຫຼາຍຂຶ້ນເພື່ອຈັດຕັ້ງປະຕິບັດ ອສຄ ໂດຍການຮ່ວມມືຢ່າງໃກ້ຊິດກັບພາກລັດ.
- ຮ່ວມກັບສະຖາບັນພັດທະນາອາຊີວະສຶກສາ (ສພອ): ໄດ້ມີການ

ກອມເອົາວຽກງານ ອສຄ ເຂົ້າໃນການຝຶກອົບຮົມ ຂອງຄູ ແລະ ຜູ້ບໍລິຫານ ອາຊີວະສຶກສາ ລວມທັງການພັດທະນາສື່ການຝຶກອົບຮົມແບບດິຈິຕອລ.

## ສິ່ງທີ່ພວກເຮົາບັນລຸ

ໃນປີ 2020, ກົດໝາຍອາຊີວະສຶກສາແຫ່ງຊາດ ໄດ້ຮັບຮອງເອົາຮູບແບບການຮຽນອາຊີວະສຶກສາ ແບບຄວບຄູ່ (ອສຄ) ໂດຍ 50% ຂອງການຝຶກອົບຮົມແມ່ນຈັດຕັ້ງປະຕິບັດ ຢູ່ສະຖານປະກອບການ. ໂຄງການໄດ້ສະໜັບສະໜູນ ການຈັດຕັ້ງປະຕິບັດ ອສຄ ເຂົ້າໃນລະບົບອາຊີວະສຶກສາ ຂອງ ສປປ ລາວ ດ້ວຍການຈັດຕັ້ງປະຕິບັດ ຮູບແບບການຮຽນ-ການສອນແບບຄວບຄູ່ໃນ 8 ສາຂາອາຊີບ. ໃນແຕ່ລະປີ ມີນັກສຶກສາຫຼາຍກວ່າ 500 ຄົນ ເຂົ້າຮຽນໃນສາຂາ ທີ່ຈັດຕັ້ງການຮຽນ-ການສອນແບບຄວບຄູ່ ແລະ ພວກເຂົາກໍພ້ອມເຮັດວຽກແລ້ວ. ອີງຕາມການເກັບກໍາຂໍ້ມູນສະຖິຕິ ໃນປີ 2021 ເຫັນວ່າ 79% ຂອງນັກສຶກສາທີ່ຮຽນຈົບ ແມ່ນມີວຽກເຮັດ ຫຼື ສືບຕໍ່ຮຽນໃນລະດັບທີ່ສູງຂຶ້ນ. ສະນັ້ນ, ກະຊວງສຶກສາທິການ ແລະ ກິລາ ຈຶ່ງສະໜັບສະໜູນໃຫ້ເພີ່ມຮູບແບບການຮຽນ ອສຄ ເຂົ້າໃນສາຂາອື່ນໆພາຍໃນວິທະຍາໄລ.

ໃນນາມທີ່ເປັນກະບອກສຽງຂອງບັນດາຫົວໜ່ວຍແຮງງານໃນ ສປປ ລາວ, ສຄອຊ ເປັນຜູ້ນໍາພາໃນດ້ານການພັດທະນາ ອສຄ ໃຫ້ເປັນແນວທາງຂອງອາຊີວະສຶກສາ. ສຄອຊ ໄດ້ສ້າງຕັ້ງສູນບໍລິການ ອສຄ ທີ່ສະໜອງບໍລິການທີ່ຈໍາເປັນ ໃຫ້ແກ່ບັນດາຫົວໜ່ວຍທຸລະກິດ ເຊັ່ນວ່າ: ການພັດທະນາມາດຕະຖານອາຊີບ, ການຝຶກອົບຮົມຄູຝຶກຢູ່ສະຖານປະກອບການ ແລະ ການມອບໃບຍ້ອງຍໍ. ໃນປີ 2023, ສຄອຊ ມອບລາງວັນ 'ການພັດທະນາສີມືແຮງງານ' ໃຫ້ແກ່ສະຖານປະກອບການ ແລະ ສະຖານອາຊີວະສຶກສາ ທີ່ດີເດັ່ນໃນການຈັດຕັ້ງປະຕິບັດ ອສຄ.

## ບົດບາດຍິງ-ຊາຍ ແລະ ການພັດທະນາເສດຖະກິດ

ໂຄງການສະໜັບສະໜູນ ການເຂົ້າເຖິງອາຊີວະສຶກສາແບບຄວບຄູ່ ເຊິ່ງເປັນທີ່ສົນໃຈທັງແມ່ຍິງ ແລະ ຜູ້ຊາຍ, ເຊັ່ນວ່າ ໄດ້ນໍາໃຊ້ເຕັກນິກດ້ານອາຊີບ ເປັນເຄື່ອງມືການຕະຫຼາດເພື່ອດຶງດູດຄວາມສົນໃຈຂອງແມ່ຍິງ. ເປົ້າໝາຍອັດຕາສ່ວນເປົ້າໝາຍຂອງແມ່ຍິງ ທີ່ເຂົ້າຮຽນ ອສຄ ທີ່ໄດ້ຮັບການສະໜັບສະໜູນໂດຍໂຄງການແມ່ນ 40%.

ແຮງງານທີ່ມີທັກສະ ເປັນຕົວຊ່ວຍຕໍ່ກັບການພັດທະນາເສດຖະກິດຂອງ ສປປ ລາວ. ຜ່ານການຈັດຕັ້ງປະຕິບັດ ອສຄ, ໄວໜຸ່ມໄດ້ຮັບການຝຶກອົບຮົມ ໃຫ້ມີທັກສະທີ່ຫົວໜ່ວຍແຮງງານຕ້ອງການ ແລະ ໃນເວລາດຽວກັນ, ນັກສຶກສາທີ່ຮຽນຈົບກໍມີໂອກາດຊອກວຽກເຮັດງານທໍາທີ່ດີຂຶ້ນ.



ຄູຢູ່ວິທະຍາໄລເຕັກນິກ - ວິຊາຊີບ ອະທິບາຍນັກສຶກສາໃນຫ້ອງຮຽນ ສາຂາ ອາຫານ ແລະ ເຄື່ອງດື່ມ ແລະ ການປຸງແຕ່ງອາຫານ ແບບມືອາຊີບ

ຮູບຈາກ: © GIZ/ພູນຊັບ ເທວົງສາ

### ກ່ຽວກັບ GIZ ລາວ

GIZ, ໃນນາມເປັນສ່ວນໜຶ່ງຂອງການຮ່ວມມື ເຢຍລະມັນ ເພື່ອການພັດທະນາ, ໄດ້ເຄື່ອນໄຫວວຽກງານຢູ່ ສປປ ລາວ ແຕ່ປີ 1993 ຕາງໜ້າໃຫ້ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງສະຫະພັນ ເຢຍລະມັນ (BMZ) ພ້ອມກັບບັນດາຜູ້ໃຫ້ທຶນ ແລະ ຄູ່ຮ່ວມພັດທະນາ. ໃນປັດຈຸບັນ, GIZ ກໍາລັງສະໜັບສະໜູນບັນດາໂຄງການໃນ 3 ຂົງເຂດບູລິມະສິດຄື: ກ) ການພັດທະນາຊົນນະບົດ, ຂ) ການອະນຸລັກຮັກສາທໍາມະຊາດ ແລະ ຊັບພະຍາກອນທໍາມະຊາດ ແລະ ຄ) ການພັດທະນາເສດຖະກິດແບບຍືນຍົງ.

ສໍາລັບຂໍ້ມູນເພີ່ມຕື່ມ, ກະລຸນາເຂົ້າເບິ່ງທີ່ເວັບໄຊ www.giz.de/laos.


| | |
|---|---|
| ຈັດພິມໂດຍ | Deutsche Gesellschaft für<br>Internationale Zusammenarbeit (GIZ) GmbH |
| | ສໍານັກງານຂຶ້ນທະບຽນ ບອນ ແລະ ເອຈ໌ບອນ, ປະເທດເຢຍລະມັນ |
| | ໂຄງການພັດທະນາອາຊີວະສຶກສາ ໃນ ສປປ ລາວ (VELA)<br>ຫ້ອງການ GIZ ລາວ, ຕູ້ ປ.ນ. 10838, ບ້ານເລກທີ 373/18, ຖະໜົນ ວັດນາກໃຫຍ່,<br>ບ້ານ ທ່າພະລານໄຊ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ<br>ໂທ: +856 21 353605<br>ເວັບໄຊ: www.giz.de/laos (ພາສາອັງກິດ); www.giz.de/laos-la (ພາສາລາວ) |
| ລົງວັນທີ | ເດືອນ ຕຸລາ 2023 |
| ອອກແບບໂດຍ | ໜ່ວຍງານຂໍ້ມູນຂ່າວສານ, ຫ້ອງການ GIZ ປະຈໍາ ສປປ ລາວ, ນະຄອນຫຼວງວຽງຈັນ |
| ຮູບຖ່າຍໂດຍ | GIZ/ພູມຊັບ ເທວົງສາ |
| ຮຽບຮຽງໂດຍ | ທ່ານນາງ ອັນຢາ ເຣເດີ |
| ຕິດຕໍ່ | ທ່ານນາງ ອັນຢາ ເຣເດີ (anja.reder@giz.de) |
| | ຫ້ອງການ GIZ ຈະເປັນຜູ້ຮັບຜິດຊອບຕໍ່ເນື້ອໃນສິ່ງພິມດັ່ງກ່າວ. |
| ຕາງໜ້າໃຫ້ | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ເຢຍລະມັນ (BMZ) |